ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0535/ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 10 APR 2017

## ຄຳສັ່ງ

### ຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ
### ວ່າດ້ວຍການຢຸດຕິການອອກໃບອະນຸຍາດນຳເຂົ້າຊິ້ນສ່ວນຍານພາຫະນະ, ນ້ຳມັນດິບ ແລະ ນ້ຳມັນເຄິ່ງສຳເລັດຮູບ ເພື່ອມາປະກອບ, ກັ່ນຕອງ ຫຼື ຜະລິດ ຢູ່ໂຮງງານ

**ເຖິງ:** - ຫ້ອງການ, ບັນດາກົມ ແລະ ສະຖາບັນ ພາຍໃນກະຊວງອຸດສາຫະກຳ ແລະ ການຄ້າ.
- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ.
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.
- ອີງຕາມ ດຳລັດ ເລກທີ 180/ນຍ, ລົງວັນທີ 07 ກໍລະກົດ 2009 ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ.
- ອີງຕາມ ການສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ ເລກທີ 1157/ກຂອ.ພອຄ, ລົງວັນທີ 17 ມີນາ 2017.

ເພື່ອເປັນການຫຼຸດຜ່ອນຂັ້ນຕອນ, ເວລາ ແລະ ຄ່າສິ້ນເປືອງ ທີ່ບໍ່ຈຳເປັນໃນການຂໍອະນຸຍາດນຳເຂົ້າຊິ້ນສ່ວນຍານພາຫະນະ, ນ້ຳມັນດິບ ແລະ ນ້ຳມັນເຄິ່ງສຳເລັດຮູບ ເພື່ອມາປະກອບ, ກັ່ນຕອງ ຫຼື ຜະລິດ ຢູ່ໂຮງງານ.

ເພື່ອສ້າງສະພາບແວດລ້ອມທີ່ອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນ ຢູ່ ສປປ ລາວ ດ້ວຍການປັບປຸງຂັ້ນຂອດການບໍລິຫານຂອງພາກລັດໃຫ້ມີຄວາມກະທັດຮັດ ແລະ ວ່ອງໄວ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງ:**

1. ໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຢຸດຕິການອອກໃບອະນຸຍາດນຳເຂົ້າຊິ້ນສ່ວນຍານພາຫະນະ, ນ້ຳມັນດິບ ແລະ ນ້ຳມັນເຄິ່ງສຳເລັດຮູບ ເພື່ອມາປະກອບ, ກັ່ນຕອງ ຫຼື ຜະລິດ ຢູ່ໂຮງງານ;
2. ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ເປັນຜູ້ຄົ້ນຄວ້າທາງດ້ານວິຊາການ ແລະ ອອກໃບຢັ້ງຢືນການນຳເຂົ້າພຽງຂັ້ນຕອນດຽວເທົ່ານັ້ນ. ໃບຢັ້ງຢືນການນຳເຂົ້າ ແມ່ນນຳໃຊ້ແທນໃບອະນຸຍາດນຳເຂົ້າ;
3. ໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ປະສານສົມທົບ ກັບ ກົມພາສີ, ກະຊວງການເງິນ ເພື່ອຊ່ວຍແຈ້ງເຖິງເຈົ້າໜ້າທີ່ພາສີປະຈຳດ່ານ ຮັບຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ໃຫ້ໄດ້ຮັບໝາກຜົນສູງ;
4. ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ກົມການນຳເຂົ້າ ແລະ ສົ່ງອອກ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່ຄຳສັ່ງສະບັບນີ້ ໃຫ້ທັງພາກລັດ ແລະ ພາກທຸລະກິດ ຮັບຊາບ ຢ່າງທົ່ວເຖິງ;

5. ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ເກັບກຳສະຖິຕິການນຳເຂົ້າຊິ້ນສ່ວນຍານພາຫະນະ, ນ້ຳມັນດິບ ແລະ ນ້ຳມັນເຄິ່ງສຳເລັດຮູບ ເພື່ອມາປະກອບ, ກັ່ນຕອງ ຫຼື ຜະລິດ ຢູ່ໂຮງງານ ເພື່ອສັງລວມ ແລະ ສະຫຼຸບລາຍງານຄະນະນຳກະຊວງ ແລະ ສະໜອງ ໃຫ້ພາກສ່ວນທີ່ກ່ຽວຂ້ອງ;

6. ເນື້ອໃນຂອງຂໍ້ຕົກລົງ ຫຼື ລະບຽບການອື່ນ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ປະກາດໃຊ້ໃນໄລຍະຜ່ານມາ ທີ່ຂັດກັບຄຳສັ່ງສະບັບນີ້ ລ້ວນແຕ່ຖືກລົບລ້າງ;

7. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ລັດຖະມົນຕີ,

ເຂັມມະນີ ພົນເສນາ